**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------

**ລັດຖະບານ** ເລກທີ 04 /ລບ

ນະຄອນຫຼວງວຽງຈັນ, ວັນທີ 09.04.2018.

## ມະຕິຕົກລົງ
## ກອງປະຊຸມລັດຖະບານເປີດກວ້າງ ຄັ້ງທີ I ປີ 2018

ກອງປະຊຸມລັດຖະບານ ເປີດກວ້າງ ຄັ້ງທີ I ປີ 2018 ໄດ້ດຳເນີນ ໃນວັນທີ 22-23 ມີນາ 2018 ທີ່ເມືອງວຽງໄຊ, ແຂວງຫົວພັນ ພາຍໃຕ້ການເປັນປະທານ ຂອງທ່ານ ທອງລຸນ ສີສຸລິດ, ນາຍົກລັດຖະມົນຕີ ໂດຍມີສະມາຊິກລັດຖະບານ, ເຈົ້າຄອງນະຄອນຫຼວງ ແລະ ບັນດາເຈົ້າແຂວງທົ່ວປະເທດ, ຜູ້ຕາງໜ້າບັນດາອົງການຈັດຕັ້ງພັກ, ອົງການນິຕິບັນຍັດ, ອົງການຕຸລາການ, ສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ເຂົ້າຮ່ວມ ທັງໝົດຈຳນວນ 62 ທ່ານ. ກອງປະຊຸມໄດ້ຮັບຟັງລາຍງານ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນ ດັ່ງນີ້:

I. **<u>ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໃນງວດ 1 ປີ 2018</u>**: ສະເໜີໂດຍທ່ານ ສຸພັນ ແກ້ວມີໄຊ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ແລະ ທ່ານ ສົມດີ ດວງດີ, ຮອງນາຍົກນາຍົກ ລັດຖະມົນຕີ, ລັດຖະມົນຕີກະຊວງ ການເງິນ.

ກອງປະຊຸມ ຕີລາຄາວ່າ ການຈັດຕັ້ງປະຕິບັດແຜນປີ 2018 ແມ່ນມີຄວາມສຳຄັນຫຼາຍ ເພາະເປັນການປະຕິບັດໄລຍະກາງສະໄໝ ຂອງແຜນ 5 ປີຄັ້ງທີ VIII; ແຕ່ໃນສະພາບປະຈຸບັນນີ້ ກໍຍັງມີຄວາມຫຍຸ້ງຍາກສັບສົນ ຍ້ອນໄດ້ຮັບຜົນກະທົບທາງກົງ ແລະ ທາງອ້ອມ ຈາກສະພາບເສດຖະກິດໂລກ ແລະ ພາກພື້ນ. ແຕ່ເຖິງຢ່າງໃດກໍຕາມໃນໄລຍະຜ່ານມາລັດຖະບານ ກໍໄດ້ເອົາໃຈໃສ່ອອກມາດຕະການຫຼາຍຢ່າງໃນການກະຕຸກຊຸກຍູ້ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໃນງວດ 1 ປີ 2018 ຢູ່ໃນທ່ວງທ່າດີຂຶ້ນ ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ອັດຕາເຕີບໂຕເສດຖະກິດ ເຖິງວ່າຍັງບໍ່ທັນສາມາດຄິດໄລ່ອອກເປັນຕົວເລກໄດ້ເທື່ອ, ແຕ່ເຫັນວ່າ ຢູ່ໃນຈັງຫວະທີ່ດີຂຶ້ນ, ບັນດາຕົວເລກຄາດໝາຍມະຫາພາກທາງດ້ານເສດຖະກິດ ກໍ່ເຫັນວ່າພວມເປັນໄປຕາມຂອບທີ່ໄດ້ກຳນົດໄວ້; ການເກັບລາຍຮັບງົບປະມານແຫ່ງລັດ ເຖິງວ່າຈະບໍ່ບັນລຸຕາມແຜນງວດ, ແຕ່ກໍ່ສາມາດເກັບໄດ້ຫຼາຍກວ່າ ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ.

ຄຽງຄູ່ກັບຜົນສຳເລັດເບື້ອງຕົ້ນດັ່ງກ່າວ, ລັດຖະບານ ກໍເຫັນວ່າ ການເຕີບໂຕຂອງເສດຖະກິດຂອງພວກເຮົາ ຍັງອີງໃສ່ການຂຸດຄົ້ນຊັບພະຍາກອນທຳມະຊາດ ແລະ ຂະແໜງພະລັງງານໄຟຟ້າເປັນຕົ້ນຕໍ, ຍັງບໍ່ແມ່ນການຂະຫຍາຍຕົວທີ່ມາຈາກການສ້າງວຽກເຮັດງານທຳ ແລະ ສ້າງລາຍຮັບຕົວຈິງໃຫ້

ປະຊາຊົນ; ການເກັບລາຍຮັບງົບປະມານ ເຖິງວ່າໄດ້ດີກ່ວາໄລຍະດຽວຂອງປີຜ່ານມາ ແຕ່ກໍ່ເຫັນວ່າຍັງບໍ່ທັນບັນລຸຕາມແຜນງວດທີ່ວາງໄວ້; ໜີ້ສິນພາກລັດ ມີທ່າອ່ຽງເພີ່ມຂຶ້ນ ແລະ ການແກ້ໄຂໜີ້ສິນຍັງຈະສືບຕໍ່ຫຍຸ້ງຍາກ ແລະ ໃຊ້ເວລາຫຼາຍປີ ຈຶ່ງຈະແກ້ໄດ້.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປີ 2018 ບັນລຸຕາມຄາດໝາຍທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາ, ກອງປະຊຸມ ໄດ້ເປັນເອກະພາບຕໍ່ບັນດາມາດຕະການທີ່ກະຊວງແຜນການ ແລະ ການລົງທຶນ ໄດ້ສະເໜີ ແລະ ຕາມການປະກອບຄຳເຫັນຂອງບັນດາທ່ານ ສະມາຊິກລັດຖະບານ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ, ຊຶ່ງໃນນັ້ນ ໃຫ້ເອົາໃຈໃສ່ຕື່ມບາງບັນຫາ ດັ່ງນີ້:

1) ໃຫ້ບັນດາກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດ ດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປະຈຳປີ 2018 ສະບັບເລກທີ 397/ນຍ, ລົງວັນທີ 22 ທັນວາ 2017 ຂອງນາຍົກລັດຖະມົນຕີ ແລະ ບັນດາບົດແນະນຳລະອຽດ ຂອງກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ເພື່ອເຮັດແນວໃດ ຕ້ອງສູ້ຊົນປະຕິບັດແຜນປີ 2018 ໃຫ້ບັນລຸຕາມແຜນການ ແລະ ຄາດໝາຍທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາ.

2) ໃຫ້ບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງ ເປັນເຈົ້າການສົມທົບກັບບັນດາທ້ອງຖິ່ນທີ່ກ່ຽວຂ້ອງ ຊຸກຍູ້ຕິດຕາມບັນດາໂຄງການໃຫຍ່ລະດັບຊາດ ທີ່ກຳລັງດຳເນີນການກໍ່ສ້າງ ເປັນຕົ້ນໂຄງການກໍ່ສ້າງທາງລົດໄຟລາວ-ຈີນ, ໂຄງການກໍ່ສ້າງເຂື່ອນໄຟຟ້າຂະໜາດໃຫຍ່ ແລະ ໂຄງການອື່ນໆ ໃຫ້ມີຄວາມຄືບໜ້າ ແລະ ສຳເລັດຕາມເວລາທີ່ກຳນົດໄວ້. ພ້ອມກັນນັ້ນ, ສຳລັບບັນດາໂຄງການໃຫຍ່ລະດັບຊາດທີ່ລັດຖະບານ ໄດ້ຕົກລົງໃຫ້ສຶກສາສຳຫຼວດຄວາມເປັນໄປໄດ້ນັ້ນ ກໍໃຫ້ຮີບຮ້ອນຊຸກຍູ້ ແລະ ອຳນວຍຄວາມສະດວກ ໃຫ້ຜູ້ລົງທຶນດຳເນີນການກະກຽມຂັ້ນຕອນຕ່າງໆ ໃຫ້ສຳເລັດໄວ ເພື່ອໃຫ້ບັນດາໂຄງການດັ່ງກ່າວ ສາມາດກ້າວເຂົ້າສູ່ຂັ້ນຕອນການກໍ່ສ້າງໃຫ້ໄວທີ່ສຸດ ເປັນຕົ້ນ ໂຄງການກໍ່ສ້າງເສັ້ນທາງດ່ວນສາຍໃຕ້ ແລະ ສາຍເໜືອ, ເສັ້ນທາງດ່ວນເຊື່ອມຈອດກັບປະເທດໃກ້ຄຽງ ແລະ ໂຄງການອື່ນໆ.

3) ໃຫ້ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ທົ່ວປະເທດ ຮີບຮ້ອນສະຫລຸບຂາດຕົວງົບປະມານປີ 2017 ໃຫ້ສຳເລັດໄວ. ພ້ອມກັນນັ້ນ ກໍມອບໃຫ້ກະຊວງການເງິນ ປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ແລະ ສະພາແຫ່ງຊາດ ກ່ຽວກັບກົນໄກການຮັບຮອງເອົາຜົນການສະຫລຸບຂາດຕົວງົບປະມານດັ່ງກ່າວ ໃຫ້ໄວຂຶ້ນຕື່ມ ທັງຮັບປະກັນໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ກຳນົດ.

4) ໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ເພີ່ມທະວີການຈັດເກັບລາຍຮັບ ຈາກຖານລາຍຮັບທີ່ມີແລ້ວ ໃຫ້ຄົບຖ້ວນ. ພ້ອມກັນນັ້ນ ກໍເອົາໃຈໃສ່ຊອກຄົ້ນແຫຼ່ງລາຍຮັບ ທີ່ຍັງບົ່ມຊ້ອນ ແລະ ລາຍຮັບທີ່ເກີດໃໝ່ຕື່ມ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການກຳນົດ.

5) ໃຫ້ບັນດາກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງທົ່ວປະເທດ ປຸກລະດົມໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ມີຄວາມຕື່ນຕົວໃນການຈ່າຍຄ່າທຳນຽມ